ຜະແນກ ນິຕິກຳ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----------------------------

ກະຊວງການເງິນ

ເລກທີ 3411. /ກງ
ນະຄອນຫລວງວຽງຈັນ, ວັນທີ 25. ຕຸລາ 2018

# ແຈ້ງການ

ເຖິງ : ບັນດາຫົວໜ່ວຍທຸລະກິດ ທີ່ດຳເນີນທຸລະກິດການນຳເຂົ້າ-ຈຳໜ່າຍນ້ຳມັນເຊື້ອໄຟ ແລະ ອາຍແກັສ

ເລື່ອງ : ການຄິດໄລ່, ການແຈ້ງມອບ ອາກອນມູນຄ່າເພີ່ມ ແລະ ອາກອນກຳໄລຈາກການນຳເຂົ້າ ແລະ ຈຳໜ່າຍ ນ້ຳມັນເຊື້ອໄຟ ຢູ່ພາຍໃນປະເທດ

- ອີງຕາມ ກົດໝາຍວ່າດ້ວຍສ່ວຍສາອາກອນ (ສະບັບປັບປຸງ) ສະບັບເລກທີ 70/ສພຊ, ລົງວັນທີ 15 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ (ສະບັບປັບປຸງ) ສະບັບເລກທີ 52/ສພຊ,ລົງວັນທີ 23 ກໍລະກົດ 2014;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງການເງິນ ສະບັບເລກທີ 144/ນຍ, ລົງວັນທີ 08 ພຶດສະພາ 2017;
- ອີງຕາມ ຄຳແນະນຳການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ສະບັບເລກທີ 0077/ກງ, ລົງວັນທີ 11 ມັງກອນ 2017;
- ອີງຕາມ ແຈ້ງການຂອງກະຊວງອຸດສະຫະກຳ ແລະ ການຄ້າກ່ຽວກັບການປັບລາຄາຂຶ້ນ-ລົງໃນແຕ່ລະໄລຍະ ໃນຂອບເຂດທົ່ວປະເທດ;
- ອີງຕາມ ການສະເໜີລາຍງານຂອງກົມສ່ວຍສາອາກອນສະບັບເລກທີ:5424/ກງ.ກສອ, ລົງວັນທີ:..12...10. 2018

ເພື່ອຮັບປະກັນໃຫ້ແກ່ການຄຸ້ມຄອງ, ການຈັດເກັບ ແລະ ການແຈ້ງມອບອາກອນປະເພດຕ່າງໆ ຈາກການນຳເຂົ້າ ແລະ ຈຳໜ່າຍນ້ຳມັນເຊື້ອໄຟ ແລະ ອາຍແກັສ ໃຫ້ຖືກຕ້ອງຕາມໂຄງສ້າງລາຄາໃນແຕ່ລະໄລຍະ ທີ່ລັດຖະບານກຳນົດ ແລະ ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ.

ກະຊວງການເງິນ ອອກແຈ້ງການ ດັ່ງນີ້:

1. ອາກອນມູນຄ່າເພີ່ມ ແລະ ອາກອນລາຍໄດ້.

ການນຳເຂົ້ານ້ຳມັນຈາກຕ່າງປະເທດມາໃນດິນແດນຂອງ ສປປ ລາວ ຕ້ອງແຈ້ງເສຍພາສີ-ອາກອນ ແລະ ຄ່າທຳນຽມຕ່າງໆ ຕາມກົດໝາຍ ແລະ ລະບຽບການ (ຕາມໂຄງສ້າງລາຄາໃນແຕ່ລະໄລຍະ) ຢູ່ດ່ານພາສີຊາຍແດນຢ່າງຄົບຖ້ວນ, ຂອດຂາຍຍົກຢູ່ພາຍໃນ ໃຫ້ຄິດໄລ່ເກັບອາກອນມູນຄ່າເພີ່ມ ຈາກການສະໜອງສິນຄ້າ ແລະ ບໍລິການ (ທີ່ບໍ່ແມ່ນການເຄື່ອນຍ້າຍ) ຕາມໂຄງສ້າງລາຄາໃນແຕ່ລະໄລຍະ ແລະ ຂອດຂາຍຍ່ອຍ ຕ້ອງຄິດໄລ່ເກັບອາກອນລາຍໄດ້ ຕາມອັດຕາທີ່ໄດ້ກຳນົດໃນແຕ່ລະໄລຍະ ໂດຍໃຫ້ປະຕິບັດການກວດນັບຕົວເລກມິດເຕີຂອງຫົວຈ່າຍນ້ຳມັນທີ່ໄດ້ຂາຍອອກໃນແຕ່ລະເດືອນ, ເພື່ອແຈ້ງມອບນຳຂະແໜງສ່ວຍສາອາກອນ ກ່ອນວັນທີ 15 ຂອງເດືອນທັດໄປ.

- ສຳລັບການນຳເຂົ້າ ແລະ ຈຳໜ່າຍນ້ຳມັນເຊື້ອໄຟ ທີ່ມີໂຄງສ້າງລາຄາກຳນົດໃນແຕ່ລະໄລຍະ ການຄິດໄລ່ເກັບອາກອນມູນຄ່າເພີ່ມຕ້ອງມອບ ແມ່ນໃຫ້ເອົາຈຳນວນນ້ຳມັນ (ລິດ) ທີ່ຂາຍອອກ ຄູນ (x) ກັບອາກອນມູນຄ່າເພີ່ມຕ້ອງມອບຕື່ມຕາມໂຄງສ້າງລາຄາໃນແຕ່ລະໄລຍະ ເພື່ອແຈ້ງມອບເຂົ້າງົບປະມານຕາມລະບຽບກົດໝາຍກຳນົດ;
- ນ້ຳມັນເຊື້ອໄຟ ແລະ ອາຍແກັດ, ທີ່ຍັງບໍ່ທັນມີໂຄງສ້າງລາຄາກຳນົດ ແລະ ກິດຈະການສຳຮອງອື່ນໆ ລວມທັງນ້ຳມັນເຊື້ອໄຟທີ່ມີໂຄງສ້າງລາຄາແລ້ວ ທີ່ຊື້ຢູ່ພາຍໃນປະເທດ ການຄິດໄລ່ເກັບອາກອນມູນຄ່າເພີ່ມຕ້ອງມອບ ໃຫ້ປະຕິບັດ

ຕາມກົນໄກກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມຄື: ອາກອນມູນຄ່າເພີ່ມເບື້ອງສິ້ນອອກ ລົບ(-) ກັບອາກອນມູນຄ່າເພີ່ມເບື້ອງສິ້ນເຂົ້າ ຕາມເອກະສານຢັ້ງຢືນການຊື້-ຂາຍຕົວຈິງ ແລະ ການແຈ້ງລາຄາໃຫ້ຖືກຕ້ອງກັບຄວາມຈິງ, ກໍລະນີແຈ້ງລາຄາບໍ່ສອດຄ່ອງຕາມໂຄງສ້າງລາຄາໄດ້ກຳນົດແຕ່ລະໄລຍະ ເຈົ້າໜ້າທີ່ສ່ວຍສາອາກອນຈະໄດ້ກວດກາໄລ່ລຽງ ແລະ ຄິດໄລ່ຄືນ ພ້ອມທັງນຳໃຊ້ມາດຕະການຕາມມາດຕາ 63 ຂອງກົດໝາຍວ່າ ດ້ວຍ ອາກອນມູນຄ່າເພີ່ມ ສະບັບເລກທີ 52/ສພຊ, ລົງວັນທີ 23 ກໍລະກົດ 2014;

- ກໍລະນີກວດກາເຫັນມີການເຊື່ອງອຳໂດຍບໍ່ແຈ້ງຈຳນວນ ນ້ຳມັນເຊື້ອໄຟ ແລະ ອາຍແກັສ ລວມທັງກິດຈະການສຳຮອງຕ່າງໆ ບໍ່ອະນຸຍາດໃຫ້ນຳເອົາອາກອນມູນຄ່າເພີ່ມເບື້ອງສິ້ນເຂົ້າມາຫັກລົບກັບອາກອນມູນຄ່າເພີ່ມເບື້ອງສິ້ນອອກ ແລະ ການຄິດໄລ່ອາກອນມູນຄ່າເພີ່ມ ໃຫ້ເອົາຈຳນວນສິນຄ້າທີ່ກວດກາໄດ້ເພີ່ມ ຄູນ (x) ກັບລາຄາຂາຍຕາມໂຄງສ້າງກຳນົດ ຫຼື ລາຄາຂາຍຕົວຈິງ ຄູນອັດຕາອາກອນມູນຄ່າເພີ່ມ 10%.

ການຄິດໄລ່ອາກອນມູນຄ່າເພີ່ມ ຈາກການນຳເຂົ້າ ແລະ ຈຳໜ່າຍນ້ຳມັນເຊື້ອໄຟ ແລະ ອາຍແກັສ ທີ່ບໍ່ແມ່ນການເຄື່ອນຍ້າຍຢູ່ພາຍໃນ, ໃຫ້ປະຕິບັດຕາມທີ່ໄດ້ກຳນົດຂ້າງນີ້, ສ່ວນການແຈ້ງມອບອາກອນມູນຄ່າເພີ່ມ ທີ່ຕ້ອງມອບຕື່ມຕາມໂຄງສ້າງລາຄາໃນແຕ່ລະໄລຍະ ໃຫ້ແຈ້ງມອບຢູ່ບ່ອນທຸລະກິດໄປເຄື່ອນໄຫວ 100% ຂອງຈຳນວນອາກອນມູນຄ່າເພີ່ມ .

2. <u>ອາກອນກຳໄລ.</u>

ອາກອນກຳໄລ ແມ່ນອາກອນທາງກົງ ຊຶ່ງຄິດໄລ່ເກັບຈາກຜູ້ດຳເນີນທຸລະກິດໂດຍກົງ ການຄິດໄລ່ເກັບອາກອນກຳໄລຈາກການນຳເຂົ້າ ແລະ ຈຳໜ່າຍ ນ້ຳມັນເຊື້ອໄຟ ແລະ ອາຍແກັສ ທີ່ມີໂຄງສ້າງລາຄາກຳນົດ, ບໍ່ທັນມີໂຄງສ້າງລາຄາກຳນົດ ລວມກິດຈະການສຳຮອງອື່ນໆ ແມ່ນໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການບັນຊີ ແລະ ໃຫ້ຄິດໄລ່ຕາມຜົນໄດ້ຮັບທາງດ້ານສ່ວຍສາອາກອນ ຕາມມາດຕາ 30 ຂອງກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບເລກທີ 70/ສພຊ, ລົງວັນທີ 15 ທັນວາ 2015.

- ກໍລະນີຫົວໜ່ວຍທຸລະກິດ ຖືບັນຊີບໍ່ຖືກຕ້ອງ ແລະ ການກວດກາພົບເຫັນມີການເຊື່ອງອຳ ໃຫ້ປະຕິບັດຕາມມາດຕາ 32 ແລະ 33 ຂອງກົດໝາຍສ່ວຍສາອາກອນ;
- ສຳລັບຫົວໜ່ວຍທຸລະກິດ ທີ່ບໍ່ຖືບັນຊີ (ບໍ່ມີບົດສະຫຼຸບບັນຊີປະຈຳປີ) ການຄິດໄລ່ ອາກອນກຳໄລ ໃຫ້ເອົາກຳໄລລວມຕາມໂຄງສ້າງລາຄາກຳນົດໃນແຕ່ລະໄລຍະ ຄູນ (x) ກັບ ອັດຕາອາກອນກຳໄລ 24%.

3. **ອາກອນມູນຄ່າເພີ່ມ ເບື້ອງສິ້ນເຂົ້າຂອງຊັບສິນ, ສ່ວນຫຼຸດການຄ້າ, ສ່ວນຫຼຸດການເງິນ ແລະ ການຕັດນ້ຳມັນບົກແຫ້ງລະເຫີຍອາຍ.**

ໃຫ້ປະຕິບັດຕາມກົດໝາຍ ວ່າດ້ວຍອາກອນມູນຄ່າເພີ່ມ ສະບັບເລກທີ 52/ສພຊ, ລົງວັນທີ 23 ກໍລະກົດ 2014, ມາດຕາ 20, 21, 22 ແລະ ຄຳແນະນຳ ວ່າດ້ວຍການຈັດຕັ້ງປະຕິບັດ ອາກອນມູນຄ່າເພີ່ມ ສະບັບເລກທີ 0077/ກງ, ລົງວັນທີ 11 ມັງກອນ 2017 ຂໍ້ທີ 7.1 ແລະ ບາງກໍລະນີ ຄືດັ່ງນີ້:

- ອາກອນມູນຄ່າເພີ່ມ ທີ່ຕິດພັນກັບການຊື້ຊັບສິນບັດຂອງວິສາຫະກິດ ແມ່ນບໍ່ອະນຸຍາດໃຫ້ນຳມາຫັກ ກັບ ອາກອນມູນຄ່າເພີ່ມຂອດຂາຍນ້ຳມັນເຊື້ອໄຟ ແລະ ກິດຈະການສຳຮອງຕ່າງໆ ໃຫ້ເອົາເຂົ້າເປັນຕົ້ນທຶນ ຫັກຄ່າຫຼຸ້ຍຫ້ຽນຕາມກົດໝາຍ ແລະ ລະບຽບການ, ເນື່ອງຈາກວ່ານ້ຳມັນແມ່ນສິນຄ້າຍຸດທະສາດລັດຖະບານຄຸ້ມຄອງລາຄາຊື້-ຂາຍໃນແຕ່ລະໄລຍະ;
- ອາກອນມູນຄ່າເພີ່ມ ເບື້ອງສິ້ນເຂົ້າທີ່ຕິດພັນກັບຄ່າຂົນສົ່ງເວລາຊື້ ບໍ່ອະນຸຍາດໃຫ້ນຳມາຫັກຄືນໃຫ້ບວກເຂົ້າເປັນຕົ້ນທຶນຂອງສິນຄ້າ ຊຶ່ງລວມຢູ່ໃນມູນຄ່າແຈ້ງພາສີຂາເຂົ້າ (CIF), ສ່ວນຄ່າຂົນສົ່ງເວລາຂາຍ ແມ່ນບໍ່ອະນຸຍາດໃຫ້ຫັກຄືນ ໃຫ້ລົງເປັນລາຍຈ່າຍຂອງທຸລະກິດ;
- ນ້ຳມັນຜິດດ່ຽງລະຫວ່າງຮັບເຂົ້າ-ຈ່າຍອອກ ແລະ ຍອດເຫຼືອຄ້າງສາງ, ເນື່ອໃນການຕັດບົກແຫ້ງລະເຫີຍອາຍ ບໍ່ອະນຸຍາດໃຫ້ຫົວໜ່ວຍທຸລະກິດຫັກຈຳນວນນ້ຳມັນທີ່ບົກແຫ້ງ ແລະ ລະເຫີຍອາຍອອກອີກ ເນື່ອງຈາກວ່າໂຄງສ້າງລາຄາໄດ້ກຳນົດຄວາມສ່ຽງດັ່ງກ່າວແລ້ວ;

- ສ່ວນຫຼຸດການຄ້າ ແລະ ສ່ວນຫຼຸດການເງິນ ແມ່ນບໍ່ອະນຸຍາດໃຫ້ລົງເປັນລາຍຈ່າຍ (ບໍ່ຮັບຮູ້) ເພາະວ່ານ້ຳມັນເຊື້ອໄຟ ແມ່ນສິນຄ້າຍຸດທະສາດລັດຖະບານເປັນຜູ້ຄຸ້ມຄອງລາຄາຊື້-ຂາຍໃນແຕ່ລະໄລຍະ ເຊິ່ງບໍ່ອະນຸຍາດໃຫ້ຂາຍຫຼຸດ-ຂາຍ ເກີນໂຄງສ້າງລາຄາໃນແຕ່ລະໄລຍະ;
- ສຳລັບຫົວໜ່ວຍທຸລະກິດທີ່ນຳໃຊ້ໃບເພີ່ມໜີ້/ຫຼຸດໜີ້ ໃນໄລຍະຜ່ານມາ ສ່ວນຜິດດ່ຽງຈຳນວນດັ່ງກ່າວແມ່ນ ບໍ່ອະນຸຍາດໃຫ້ລົງເປັນລາຍຈ່າຍ ແລະ ບໍ່ອະນຸຍາດໃຫ້ນຳໃຊ້ຕໍ່;

4. ສຳລັບຫົວໜ່ວຍທຸລະກິດທີ່ດຳເນີນການກວດກາບັນຊີປະຈຳປີ (ກວດກາໄລ່ລຽງ) ສຳເລັດໄປແລ້ວໃຫ້ຢັ້ງຢືນເອົາຕາມບົດບັນທຶກກວດກາທີ່ໄດ້ເຊັນຮ່ວມກັນ, ກໍລະນີຫົວໜ່ວຍທຸລະກິດໃດຫາກຍັງຄ້າງການກວດກາບັນຊີປະຈຳປີ (ກວດ ກາໄລ່ລຽງ) ແມ່ນໃຫ້ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້, ເນື່ອງຈາກວ່າລັດຖະບານໄດ້ອອກໂຄງສ້າງລາຄານ້ຳມັນເຊື້ອໄຟ ແລະ ອາຍແກັສ ເປັນເວລາດົນພໍສົມຄວນ ແລະ ໄດ້ກຳນົດລາຄາຊື້-ຂາຍ, ພັນທະຕ່າງໆຢ່າງຈະແຈ້ງແລ້ວ.

ກໍລະນີມີການເຄື່ອນຍ້າຍສິນຄ້າຈາກແຂວງໜຶ່ງໄປຫາອີກແຂວງໜຶ່ງ ທີ່ບໍ່ມີການສະໜອງການຊື້-ຂາຍ ແຕ່ລະຄັ້ງຕ້ອງແຈ້ງຕໍ່ຂະແໜງພາສີເພື່ອອອກເອກະສານຕິດຕາມໃນການເຄື່ອນຍ້າຍສິນຄ້າດ້ວຍຕົນເອງຕາມແບບຟອມ ບໍ່ 88 ແລ້ວສົ່ງໃຫ້ຂະແໜງສ່ວຍສາອາກອນ ຢູ່ຕົ້ນທາງ ແລະ ປາຍທາງ.

1. ນ້ຳມັນເຊື້ອໄຟ ແລະ ອາຍແກັສ ທີ່ນຳເຂົ້າຈາກຕ່າງປະເທດທຸກໆຄັ້ງຕ້ອງໄດ້ເອົາລົງສາງຂອງຕົນຢູ່ພາຍໃນກ່ອນ, ບໍ່ອະນຸຍາດໃຫ້ລົດນ້ຳມັນທີ່ນຳເຂົ້າຈາກຕ່າງປະເທດໄປສົ່ງໃຫ້ກັບລູກຄ້າ ຫຼື ປ້ຳຕົນເອງໂດຍກົງ;
2. ເວລາສະໜອງສິນຄ້າ ແລະ ບໍລິການ ໃຫ້ລູກຄ້າ ຫຼື ລົງປ້ຳຕົນເອງ (ທີ່ບໍ່ແມ່ນການເຄື່ອນຍ້າຍ) ຕ້ອງອອກໃບເກັບເງິນອາກອນ ພ້ອມທັງຄິດໄລ່ອາກອນມູນຄ່າເພີ່ມຕາມໂຄງສ້າງໃນແຕ່ລະໄລຍະ ແລະ ແຈ້ງມອບເຂົ້າງົບປະມານຕາມກົດໝາຍ ແລະ ລະບຽບການ;
3. ການເຄື່ອນຍ້າຍນ້ຳມັນເຊື້ອໄຟ ແລະ ອາຍແກັສ ແຕ່ແຂວງໜຶ່ງໄປຫາອີກແຂວງໜຶ່ງ ຕ້ອງໄດ້ປະກອບເອກະສານໃນການເຄື່ອນຍ້າຍແບບຟອມບໍ່ 88 ນຳຂະແໜງພາສີ ແລະ ຕ້ອງມີເອກະສານຊ້ອນທ້າຍຂັດຕິດ ໃບບໍ່ IM 4 ນ້ຳມັນທີ່ນຳເຂົ້າ, ໃບເກັບເງິນອາກອນ, ໃບບິງຈ່າຍອອກສາງ ຂັດຕິດທຸກຄັ້ງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານຊາບ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນແຈ້ງ ການສະບັບນີ້ຢ່າງເຂັ້ມງວດ.

ລັດຖະມົນຕີກະຊວງການເງິນ

ບຸນໄຈນ ອຸບົນປະເສີດ